# ການປະກັນຄຸນນະພາບການສຶກສາ

# Education Quality Assurance (QA)

ປັນຍາ ຈັນທະວົງ, ຮອງຜູ້ອຳນວຍການ
ສູນປະກັນຄຸນນະພາບການສຶກສາ,
ກະຊວງສຶກສາທິການ ແລະກິລາ

# ໂອ.... ຊິເຮັດຈັ່ງໃດເດ ?



# ເນື້ອໃນ

- ຄວາມໝາຍ (10 ນທ.)
- ຫລັກການລວມ (10 ນທ.)
- ມາດຕະຖານຄຸນນະພາບການສຶກສາຂອງລາວ (15 ນທ.)
- ທິດທາງການພັດທະນາໃນຕໍ່ໜ້າ (5 ນທ.)

# ຄວາມໝາຍ

- ນິຍາມ:

  ການປະກັນຄຸນນະພາບ (Quality Assurance: QA)ແມ່ນຂະບວນການ ຂອງການຕິດຕາມ ແລະປະເມີນຜົນ ໃນດ້ານດ້ານຕ່າງໆຂອງ ໂຄງການ (project), ການບໍລິການ(service) ຫລືສິ່ງ(ສະຖານ)ອຳນວຍຄວາມສະດວກ(facility)ໃດໜຶ່ງ ຢ່າງເປັນລະບົບ ເພື່ອຮັບປະກັນວ່າສິ່ງດັ່ງກ່າວໄດ້ຄຸນນະພາບຕາມມາດຕະຖານ.

- ໃນ QA ມີສອງຫລັກການພື້ນຖານຄື:
  - ຜົນຜະລິດຕ້ອງເໝາະສົມກັບຈຸດປະສົງທີ່ຕັ້ງໄວ້ (**Fit for purpose**)
  - ເບິ່ງມາຕັ້ງແຕ່ຈຸດເລີ່ມຕົ້ນ ເພື່ອຈຳກັດຂໍ້ພິດພາດ (**Right first time**)
- ໃນ QA ປະກອບດ້ວຍ ບັນດາຂໍ້ກຳນົດກ່ຽວກັບຄຸນນະພາບຂອງ ວັດຖຸດິບ, ສ່ວນປະກອບ, ຜະລິດຕະພັນ, ອົງປະກອບ/ການບໍລິການອື່ນໆ ທີ່ກ່ຽວພັນເຖິງຜະລິດຕະພັນ ແລະ ຂັ້ນຕອນການບໍລິຫານ ການກວດກາ ອື່ນໆ...

# ຄວາມໝາຍ

- QA ບໍ່ໄດ້ຈຳກັດພຽງແຕ່ໃນຂະແໜງການຜະລິດ ເຊິ່ງມັນສາມາດນຳໃຊ້ ກັບບັນດາວຽກງານ ທີ່ເປັນທັງທຸລະກິດ ແລະ ບໍ່ແມ່ນທຸລະກິດ ເຊັ່ນ: ວຽກງານອອກແບບ, ການບໍລິຫານຈັດການ, ວຽກງານທີ່ປຶກສາ, ການທະນາຄານ, ປະກັນໄພ, ການພັດທະນາຊອບແວຄອມພິວເຕີ, ທຸລະກິດຂາຍຍ່ອຍ, ການຂົນສົ່ງ, ການສຶກສາ.... ແລະ ອື່ນໆ
- ໃນຂົງເຂດການສຶກສາ ແມ່ນເລີ່ມນຳໃຊ້ ຫລັງສົງຄາມໂລກຄັ້ງທີ2
- ໃນອາຊຽນ ແມ່ນປະເທດຟີລິປິນ ນຳໃຊ້ຕັ້ງແຕ່ຊຸມປີ1950, ໄທນຳໃຊ້ໄດ້ 10ກວ່າປີ, ຫວຽດນາມ ແລະກຳປູເຈຍ 7-8ປີ.
- ລາວເຮົາ ຍັງຢູ່ໃນຂັ້ນຕອນລິເລີ່ມ
- ປັດຈຸບັນ, ມີຫລາຍເຄືອຂ່າຍປະກັນຄຸນນະພາບ ເຊັ່ນໃນພາກພື້ນ ເຊັ່ນ:
  - APQN (Asia Pacific Quality Network)
  - AQAN (ASEAN Quality Assurance Network)

# ຄວາມໝາຍ

- ຈຳນວນຂອງສະຖາບັນການສຶກສາຊັ້ນສູງ ແລະ ອາຊີວະສຶກສາ

| | ຕົ້ນສັງກັດ | ຈຳນວນ |
|---|---|---|
| 1 | ກະຊວງສຶກສາທິການ ແລະກິລາ (ພາກລັດ)<br>ມະຫາວິທະຍາໄລ 4ແຫ່ງ, ສ້າງຄູ 10ແຫ່ງ, ອາຊີວະ 22ແຫ່ງ | 36 |
| 2 | ກະຊວງສຶກສາທິການ ແລະກິລາ (ພາກເອກະຊົນ)<br>ໃນນີ້, 34ແຫ່ງ ຈັດການສອນຫລັກສູດປະລິນຍາຕີ | 92 |
| 3 | ກະຊວງສາທາລະນະສຸກ<br>ມະຫາວິທະຍາໄລ 1ແຫ່ງ, ວິທະຍາໄລ (ແລະອື່ນໆ) 8ແຫ່ງ | 9 |
| 4 | ກະຊວງອື່ນໆ<br>ກະສິກຳ ແລະປ່າໄມ້ 4<br>ຍຸຕິທຳ 3<br>ການເງິນ 3<br>ຖະແຫລງຂ່າວ ແລະວທ. 4<br>ອື່ນໆ 4 | 18 |
| | ລວມ | 155 |

# ຄວາມໝາຍ




**"It is not the strongest of the species that survive, nor the most intelligent, but the one most responsive to change"**

**Charles Darwin**

# ຄວາມໝາຍ

- ຄວາມຈຳເປັນທີ່ຕ້ອງມີການປ່ຽນແປງ
  - ສະພາບແວດລ້ອມທີ່ປ່ຽນໄປ ASEAN, AFTA, WTO ອື່ນໆ
  - ປະເທດຊາດ ຮຽກຮ້ອງເຖິງຊັບພະຍາກອນມະນຸດທີ່ມີຄຸນນະພາບ
  - ສະຖາບັນການສຶກສາຊັ້ນສູງ ຕ້ອງປັບປ່ຽນເພື່ອສາມາດແຂ່ງຂັນ
    - ສ້າງຊັບພະຍາກອນມະນຸດ ຕາມຈຸດໝາຍຂອງປະເທດຊາດ
    - ເປັນສະຖານສຶກສາ ທີ່ດຶງດູດໃຈ-ສົນໃຈ ໃຫ້ນັກຮຽນຢາກເຂົ້າມາ
    - ພັດທະນາ ເຂົາເຈົ້າໄດ້ຢ່າງມີຄຸນນະພາບ ສາມາດດຳລົງຊີວິດ ແລະຮັບໃຊ້ ປະເທດຊາດບ້ານເມືອງ
    - ( ... ແລະ ອື່ນໆອີກ)

- ປະຈຸບັນ, ພວກເຮົາບໍ່ໄດ້ເຮັດຫຍັງ ເພື່ອ 3ຂໍ້ ຂ້າງເທິງນີ້ບໍ?
- ພວກເຮົາ ໝັ້ນໃຈໄດ້ແນວໃດວ່າ ກຳລັງເຮັດຢູ່ ແລະ ເຮັດໄດ້ດີແລ້ວ?
- ພວກເຮົາ ຈະອະທິບາຍໃຫ້ສັງຄົມ ໄດ້ແນວໃດ?
- ພວກເຮົາ ຕ້ອງມີການປ່ຽນແປງ!

# ຄວາມໝາຍ

## ພວກເຮົາຈະປ່ຽນແນວໃດ?

How can we change ?

## ພວກເຮົາຈະສາມາດ ໃຊ້ເຄື່ອງມືຫຍັງ?

What instrument should we use?

QA → ພວກເຮົາຈະຈັດຕັ້ງປະຕິບັດ ແນວໃດ?

How can we implement?

# ຫລັກການລວມ

- ກຳນົດມາດຕະຖານ ແລະຕົວຊີ້ວັດ(ຕົວຊີ້ບອກ)
- ເອົາມາດຕະຖານໄປໃຊ້ໂດຍວິທີ PDCA: ວາງແຜນ, ປະຕິບັດ, ກວດສອບ, ປັບປຸງ



# ຫລັກການລວມ

ວົງຈອນPDCA

(Plan - Do - Check - Act)



# ຫລັກການລວມ

- ມີ2ຂັ້ນຕອນຂອງການປະກັນຄຸນນະພາບ
  - ການປະກັນພາຍໃນ Internal Quality Assurance (IQA)
    - ສະຖາບັນດຳເນີນການປະເມີນຕົນເອງທຸກໆປີ
    - ສ້າງແຜນພັດທະນາ/ປັບປຸງ
    - ສະເໜີໜ່ວຍງານຕົ້ນສັງກັດ ເພື່ອຈັດສັນງົບປະມານ ຫລືຊ່ອຍເຫລືອ ຫລືມີມາດຕະການແກ້ໄຂອື່ນໆ
    - ໜ່ວຍງານຕົ້ນສັງກັດ ຈັດໃຫ້ມີການປະເມີນພາຍໃນ (1ຄັ້ງ/3ປີ), ໃຫ້ພາກສ່ວນທີ່ກ່ຽວຂ້ອງ ທົບທວນຄືນການປະເມີນຕົນເອງຂອງສະຖາບັນ, ປຶກສາຫາລື ແລະ ແລກປ່ຽນບົດຮຽນ ເຊິ່ງກັນແລະກັນ
  - ການປະກັນພາຍນອກ External Quality Assurance (EQA)
    - ດຳເນີນການປະເມີນພາຍນອກ, ໂດຍເປັນຕົວແທນໃຫ້ກັບຂະແໜງການ/ສັງຄົມ
    - ໃນຫລາຍໆປະເທດ 1ຄັ້ງ/5ປີ
    - ມີການຮັບຮອງຄຸນນະພາບ ຫລືວ່າ ຜ່ານ/ບໍ່ຜ່ານ

# ຫລັກການລວມ

- ການຮັບຮອງ Accreditation
  - ຮັບຮອງສະຖາບັນ Institution Accreditation
  - ຮັບຮອງຫລັກສູດ Program Accreditation
- ການອອກໃບອະນຸຍາດ Licensing

- ຕ່າງກັນແນວໃດ?
  - ທຸກໆສະຖາບັນ/ຫລັກສູດ ຕ້ອງໄດ້ຮັບອະນຸຍາດກ່ອນ ຈິ່ງມີການຮັບຮອງ. ຖ້າມີໃບອະນຸຍາດ ກໍ່ໝາຍຄວາມວ່າ ມີຄວາມພ້ອມທາງດ້ານຊັບພະຍາກອນຕ່າງໆ ເພື່ອບັນລຸເປົ້າໝາຍຂອງສະຖາບັນ/ຫລັກສູດ ເຊິ່ງເປັນເງື່ອນໄຂ ໃນການເປີດປະຕູ ຮັບນັກສຶກສາ.
  - ການຮັບຮອງ ຈະມາຕາມຫລັງເພື່ອຢັ້ງຢືນວ່າ ສະຖາບັນໄດ້ປະຕິບັດຕາມໜ້າທີ່ ແລະ ຈຸດໝາຍຂອງຕົນ ຢ່າງແທ້ຈິງ

# ມາດຕະຖານ

- ແນວຄວາມຄິດ ໃນການກຳນົດມາດຕະຖານຕາມ4ຈຸດໃຫຍ່ໆທີ່ສຳຄັນ
  - ພາລະໜ້າທີ່ Mission
  - ຊັບພະຍາກອນ Resources
  - ຜົນສຳເລັດໃນປັດຈຸບັນ Current Achievement
  - ການສືບຕໍ່ພັດທະນາ Continuing Achievement

# ມາດຕະຖານ

- ແນວຄວາມຄິດ ໃນການກຳນົດມາດຕະຖານຕາມ IPO



# ມາດຕະຖານ



input
process
output
management
policy
staff
students
funding
facilities
study programs
research projects
community services
graduates
scientific production
services
Mission statement
Goals & aims
Expected outcomes
Realized mission
Achieved goals
Achieved outcomes
Stakeholders satisfaction

# ມາດຕະຖານ

| COUNTRY | CAMBODIA (ACC) | INDIA (NAAC) | MALAYSIA (NAB/QAD) | PHILIPPINES (PAASCU) | THAILAND (ONESQA) | USA-NEASC | UNESCO STUDY GROUP |
|---|---|---|---|---|---|---|---|
| | Mission | Curricular Aspects | Vision, Mission, Educational Goals and LO | Mission and Objectives | Graduate Quality | Mission and Purposes | Integrity and Mission |
| | Governing Structure | Teaching-Learning and Evaluation | Curriculum design and Delivery | Community Outreach | Teaching and Learning | Planning and Evaluation | Governance and Management |
| | Management and Planning | Research, Consultancy and Extension | Assessment of Students | Faculty | Academic Supports | Organization and Governance | Human Resources |
| | Academic Programme | Infrastructure and Learning Resources | Student Selection and Support Services | Curriculum and Instruction | Research and Innovation | The Academic Programme | Learning Resources and Infrastructure |
| | Teaching Staff | Student Progres-sion and Support | Academic Staff | Library | Academic Services | Faculty | Financial Management |
| **PRIORITY AREAS** | Students and Student Services | Organisation and Management | Educational Resources | Laboratories | Preservation of Arts and Culture | Students | Student Profile and Support Services |
| | Learning Resources | Healthy Practices | Programme Monitoring and Review | Physical Plant and Facilities | Management and Administration | Library and Other Information Resources | Curricular Aspects |
| | Physical Facilities | | Leadership and Governance and Administration | Student Services | Internal QA Systems | Physical and Technological Resources | Teaching-Learning and Evaluation |
| | Financial Management and Planning | | Total Continual Improvement | Administration | | Financial Resources | Research, Consultancy and Extension |
| | Dissemination of Information | | | | | Public Disclosure | Quality Assurance |
| | | | | | | Integrity | |

# ມາດຕະຖານ

I. ວິໄສທັດ, ພາລະໜ້າທີ່ ແລະຈຸດໝາຍການກໍ່ສ້າງ
II. ການຄຸ້ມຄອງ ແລະບໍລິຫານ
III. ການພັດທະນາ ແລະຄຸ້ມຄອງບຸກຄະລາກອນ
IV. ຫຼັກສູດ ແລະປະສິດທິຜົນຂອງການຮຽນ-ການສອນ
V. ການສົ່ງເສີມນັກສຶກສາ
VI. ສິ່ງອຳນວຍຄວາມສະດວກ ແລະສະພາບແວດລ້ອມຂອງສະຖາບັນ
VII. ແຫຼ່ງການຮຽນຮູ້
VIII. ລະບົບຂໍ້ມູນຂ່າວສານສຳລັບການບໍລິຫານ
IX. ລະບົບການປະກັນຄຸນນະພາບພາຍໃນ
X. ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ

# ມາດຕະຖານ

- ລະດັບຄຸນນະພາບຂອງມາດຕະຖານ (3A)
  - AWARENESS

    ມີແຜນງານ, ໂຄງການ, ນະໂຍບາຍ ບົ່ງບອກວ່າ ສະຖາບັນໃຫ້ຄວາມສຳຄັນກັບ ມາດຕະຖານນັ້ນໆ
  - ATTEMPT

    ມີກິດຈະກຳ, ການຈັດຕັ້ງປະຕິບັດ ຫລື ການດຳເນີນຕາມແຜນ... ເພື່ອຊຸກຍູ້ໃຫ້ມີຄຸນນະພາບ ໃນມາດຕະຖານນັ້ນໆ
  - ACHIEVEMENT

    ມີຫລັກຖານທີ່ເປັນຜົນໄດ້ຮັບຂອງການຈັດກິດຈະກຳ ຫລືການດຳເນີນງານຕາມແຜນ ຂອງມາດຕະຖານນັ້ນໆ

# ວິໄສທັດ, ພາລະໜ້າທີ່, ແລະຈຸດໝາຍການກໍ່ສ້າງ



**ຫລັກການ**

- ວິໄສທັດ, ພາລະໜ້າທີ່ ແລະຈຸດໝາຍການກໍ່ສ້າງຂອງສະຖາບັນ ກຳນົດຈະແຈ້ງ, ເຮັດໃຫ້ເຫັນໄດ້ເຖິງ ບັນດາກິດຈະກຳແລະບົດບາດຂອງສະຖາບັນໃນລະບົບການສຶກສາຊັ້ນສູງຂອງ ສປປ ລາວ.
- ຈຸດໝາຍການກໍ່ສ້າງຂອງສະຖາບັນ ຕ້ອງຕອບສະໜອງຄວາມຕ້ອງການຕົວຈິງຂອງປະເທດ ແລະຂອງທ້ອງຖິ່ນທີ່ສະຖາບັນຕັ້ງຢູ່. ສິ່ງເຫລົ່ານີ້ ຕ້ອງລະບຸໄວ້ຢ່າງຈະແຈ້ງ ໃນບັນດາເອກະສານຂອງສະຖາບັນ ເຊັ່ນ: ແຜ່ນພັບ ຫລື ປຶ້ມແນະນຳສະຖາບັນ, ແລະຈັດພິມໄວ້ຢ່າງພຽງພໍ ເພື່ອໃຫ້ຜູ້ທີ່ສົນໃຈຈະເຂົ້າສຶກສາ ແລະບຸກຄົນອື່ນໆທີ່ກ່ຽວຂ້ອງ ສາມາດຮັບຮູ້ໄດ້.
- ມີຫຼັກຖານປະກອບໃຫ້ເຫັນວ່າ ບັນດາພາກສ່ວນຕ່າງໆ ໄດ້ຮັບຮູ້ ແລະເຂົ້າໃຈວິໄສທັດ, ພາລະໜ້າທີ່ ແລະຈຸດໝາຍການກໍ່ສ້າງຂອງສະຖາບັນ ໂດຍມີການປະຖົມນິເທດ ໃຫ້ບັນດາຄູອາຈານ ແລະນັກສຶກສາທີ່ເຂົ້າມາໃໝ່ ໃຫ້ເຂົ້າໃຈກ່ຽວກັບສິ່ງເຫລົ່ານີ້.
- ມີການທົບທວນ ແລະປັບປຸງວິໄສທັດ, ພາລະໜ້າທີ່ ແລະຈຸດໝາຍການກໍ່ສ້າງ ຂອງສະຖາບັນການສຶກສາ ເປັນປະຈຳ ຕາມໄລຍະເວລາທີ່ສະຖາບັນກຳນົດໄວ້.

# ວິໄສທັດ, ພາລະໜ້າທີ່, ແລະຈຸດໝາຍການກໍ່ສ້າງ

<u>ຕົວຊີ້ວັດ</u>

- (1) ວິໄສທັດ, ພາລະໜ້າທີ່, ແລະຈຸດໝາຍການກໍ່ສ້າງ ທີ່ໄດ້ຖືກກຳນົດອອກມານັ້ນ ມີເນື້ອໃນຈະແຈ້ງ ແລະຖືກປະກາດໃຊ້ຢ່າງເປັນທາງການ, ແລະທຸກພາກສ່ວນໄດ້ຮັບຮູ້ ແລະເຂົ້າໃຈ.
- (2) ຈຸດໝາຍການກໍ່ສ້າງ ສອດຄ່ອງກັບບົດບາດໜ້າທີ່, ແທດເໝາະກັບທ່າແຮງ ແລະທິດທາງພັດທະນາຂອງສະຖາບັນ ແນໃສ່ເພື່ອບັນລຸຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດສັງຄົມຂອງປະເທດ, ທ້ອງຖິ່ນ ແລະຂະແໜງການນັ້ນໆ.
- (3) ມີການຈັດປະຖົມນິເທດ ກ່ຽວກັບວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍການກໍ່ສ້າງ.
- (4) ມີການທົບທວນ ແລະປັບປຸງ ວິໄສທັດ, ພາລະໜ້າທີ່, ແລະຈຸດໝາຍການກໍ່ສ້າງ.

<u>ຫລັກຖານ</u>:

ເອກະສານກ່ຽວກັບວິໄສທັດ, ພາລະໜ້າທີ່ຂອງສະຖາບັນ, ເຄື່ອງມືປະຊາສຳພັນຕ່າງໆ ເຊັ່ນ: ປ້າຍຄຳຂວັນ, ແຜ່ນພັບ, ເວັບໄຊ, ອື່ນໆ.

ບົດລາຍງານການປະຖົມນິເທດ, ບົດບັນທຶກກອງປະຊຸມ..

# ການຄຸ້ມຄອງ ແລະບໍລິຫານ

ຕົວຊີ້ວັດ5: ມີສະພາບໍລິຫານ ເຊິ່ງມີບົດບາດ ແລະໜ້າທີ່ໆໄດ້ກຳນົດໄວ້ ໂດຍສອດຄ່ອງກັບບັນດາດຳລັດທີ່ມີຢູ່.

ຕົວຊີ້ວັດ6: ມີໂຄງຮ່າງການບໍລິຫານຈະແຈ້ງ ໂດຍມີການບັນຈຸພະນັກງານທີ່ມີວຸດທິເໝາະສົມ ແລະມີຄວາມສາມາດເຂົ້າໃນທຸກຕຳແໜ່ງງານທີ່ຖືກສ້າງຕັ້ງຂຶ້ນ.

ຕົວຊີ້ວັດ7: ມີແຜນພັດທະນາສະຖາບັນ 3-5 ປີ

ຕົວຊີ້ວັດ8: ມີນະໂຍບາຍ ຫຼື ລະບຽບການ ກ່ຽວກັບການບໍລິຫານພະນັກງານ.

ຕົວຊີ້ວັດ9: ມີລະບຽບການກ່ຽວກັບການບໍລິຫານດ້ານການເງິນທີ່ດີ, ໂປ່ງໃສ, ແລະຍືນຍົງ.

ຕົວຊີ້ວັດ10: ງົບປະມານຖືກນຳໃຊ້ຕາມແຜນງົບປະມານປະຈຳປີ.

ຕົວຊີ້ວັດ11: ມີການດຳເນີນການກວດສອບລາຍຮັບ-ລາຍຈ່າຍປະຈຳປີ.

# ການພັດທະນາ ແລະຄຸ້ມຄອງບຸກຄະລາກອນ

ຕົວຊີ້ວັດ12: ພະນັກງານຄູອາຈານມີວຸດທິຕາມລະບຽບການ ແລະມີຄວາມສາມາດກັບລະດັບທີ່ສິດສອນ.

ຕົວຊີ້ວັດ13: ອັດຕາສ່ວນຂອງຄູອາຈານ ຕໍ່ນັກສຶກສາ ຕ້ອງສອດຄ່ອງກັບເງື່ອນໄຂທີ່ກຳນົດໄວ້ໃນຫຼັກສູດ

ຕົວຊີ້ວັດ14: ມີແຜນການ, ລະບຽບກ່ຽວກັບການຄັດເລືອກ ແລະບັນຈຸພະນັກງານຄູອາຈານ.

ຕົວຊີ້ວັດ15: ມີລະບົບການປະເມີນຜົນການເຮັດວຽກຂອງພະນັກງານຄູອາຈານ.

ຕົວຊີ້ວັດ16: ມີນະໂຍບາຍ/ລະບຽບຫລັກການ ກ່ຽວກັບສິ່ງຈູງໃຈ ແລະສະຫວັດດີການຕ່າງໆ.

ຕົວຊີ້ວັດ17: ມີແຜນການ/ແຜນງານພັດທະນາພະນັກງານຄູອາຈານ/ພະນັກງານອື່ນໆ.

# ຫຼັກສູດ ແລະປະສິດທິຜົນຂອງການຮຽນ-ການສອນ

ຕົວຊີ້ວັດ18: ມີຄະນະກຳມະການພັດທະນາຫຼັກສູດ.

ຕົວຊີ້ວັດ19: ບັນດາຫຼັກສູດທີ່ພັດທະນາຂຶ້ນມາ ຕ້ອງໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ, ຕະຫຼາດແຮງງານ ແລະການພັດທະນາຊັບພະຍາກອນມະນຸດຂອງປະເທດເຮົາ

ຕົວຊີ້ວັດ20: ບັນດາຫຼັກສູດຕ່າງໆ ມີການນຳໃຊ້ເຕັກນິກການປະດິດສິ່ການຮຽນ-ການສອນ ແລະເຕັກໂນໂລຊີ ເພື່ອພັດທະນາທັກສະ ແລະຄວາມສາມາດຂອງນັກສຶກສາ.

ຕົວຊີ້ວັດ21: ສະຖາບັນໃຫ້ມີກົນໄກເພື່ອຕິດຕາມ, ປະເມີນຕີລາຄາ ແລະຕຳນິຕິຊົມກ່ຽວກັບປະສິດທິຜົນຂອງການຮຽນ-ການສອນ.

ຕົວຊີ້ວັດ22: ໃຫ້ໂອກາດແກ່ນັກສຶກສາ ເຂົ້າຮ່ວມໃນກິດຈະກຳຕ່າງໆ ລວມທັງການກະກຽມການລົງຝຶກງານ, ການຝຶກອົບຮົມການເປັນຜູ້ນຳ ແລະບັນດາກິດຈະກຳຫຼັກສູດຮ່ວມ.

# ການສົ່ງເສີມນັກສຶກສາ

ຕົວຊີ້ວັດ23: ມີລະບຽບຫຼັກການກ່ຽວກັບການອະນຸມັດເຂົ້າຮຽນ ແລະຖືກຈັດຕັ້ງປະຕິບັດໂດຍສະຖາບັນ.

ຕົວຊີ້ວັດ24: ມີຂະບວນການໃຫ້ນັກສຶກສາຢ່າງຈະແຈ້ງ ແລະໂປ່ງໃສ.

ຕົວຊີ້ວັດ25: ມີການໃຫ້ຄໍາປຶກສາດ້ານການຮຽນ.

ຕົວຊີ້ວັດ26: ມີການເຄື່ອນໄຫວກິດຈະກໍານອກຫຼັກສູດ (ເຊັ່ນ: ກິລາ, ສິລະປະ, ແລະວັດທະນາທໍາ).

ຕົວຊີ້ວັດ27: ມີການສ້າງຕັ້ງສະມາຄົມ ຕົວແທນນັກສຶກສາ ແລະສະມາຄົມອະດີດນັກສຶກສາ.

ຕົວຊີ້ວັດ28: ມີເຄືອຄ່າຍກັບຜູ້ປະກອບການ ເພື່ອຊ່ວຍນັກສຶກສາທີ່ຮຽນຈົບໃໝ່ໃນການຊອກວຽກເຮັດວຽກທໍາ.

# ສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມຂອງສະຖາບັນ

ຕົວຊີ້ວັດ29: ແຜນພັດທະນາສິ່ງອຳນວຍຄວາມສະດວກຄົບວົງຈອນຂອງສະຖາບັນ ໄດ້ຮັບການກະກຽມໄວ້ ແລະມີການທົບທວນ ແລະປັບປຸງເປັນແຕ່ລະໄລຍະ ໂດຍອີງຕາມຄວາມຕ້ອງການໃນປະຈຸບັນ ແລະອະນາຄົດ

ຕົວຊີ້ວັດ30: ສະຖາບັນມີສິ່ງອຳນວຍຄວາມສະດວກໃຫ້ພຽງພໍ ເຊັ່ນ: ອາຄານ, ຫ້ອງຮຽນ, ຫ້ອງປະຊຸມ, ຫ້ອງການ, ອຸປະກອນການຮຽນ-ການສອນ

ຕົວຊີ້ວັດ31: ສະຖາບັນຄວນຕັ້ງຢູ່ໃນສະພາບແວດລ້ອມທີ່ເອື້ອອຳນວຍສຳລັບການຮຽນ-ການສອນ ພ້ອມມີສະຖານທີ່ກວ້າງຂວາງ ສຳລັບການຫຼິ້ນກິລາ ແລະການຈັດກິດຈະກຳອື່ນໆທີ່ຮັບໃຊ້ໃຫ້ແກ່ການສຶກສາ ຕາມລະບຽບການຂອງກະຊວງສຶກສາທິການ ແລະ ກິລາວາງອອກ

ຕົວຊີ້ວັດ32: ສະຖາບັນຕ້ອງ ມີລະບົບຮັກສາສຸຂະພາບ, ຄວາມປອດໄພ, ການປ້ອງກັນຄວາມສະຫງົບ

# ແຫຼ່ງການຮຽນຮູ້

ຕົວຊີ້ວັດ33: ມີແຫຼ່ງຮຽນຮູ້ທີ່ພຽງພໍຢູ່ໃນສະຖາບັນ ເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງຄອມພິວເຕີ້, ສື່ທາງເອເລັກໂຕຼນິກ, ແລະອື່ນໆຮັບໃຊ້ການຮຽນການສອນ, ການຄົ້ນຄ້ວາວິໄຈ ແລະກິດຈະກຳຂອງສະຖາບັນ

ຕົວຊີ້ວັດ34: ຫ້ອງສະໝຸດຕ້ອງເປີດບໍລິການຕາມກຳນົດເວລາ ທັງນີ້ກໍ່ແມ່ນເພື່ອໃຫ້ບໍລິການນັກສຶກສາ, ພະນັກງານຄູອາຈານ, ແລະພະນັກງານອື່ນໆໄດ້ນຳໃຊ້

ຕົວຊີ້ວັດ35: ສະຖາບັນ ມີສື່-ອຸປະກອນການຮຽນ-ການສອນ, ລວມທັງໃນຮູບແບບເອເລັກໂທຣນິກ ທີ່ມີການປັບປຸງຕະຫຼອດເວລາ ເພື່ອສະໜັບສະໜູນຫຼັກສູດການຮຽນ-ການສອນ

ຕົວຊີ້ວັດ36: ຫ້ອງທົດລອງຕ້ອງມີອຸປະກອນທົດລອງທີ່ຈຳເປັນ, ເຄື່ອງປະຈັກຕາ ແລະສິ່ງອຳນວຍຄວາມສະດວກພຽງພໍ ເພື່ອຕອບສະໜອງ ການທົດລອງໃນສາຂາວິຊາຮຽນຕ່າງໆ

ຕົວຊີ້ວັດ37: ມີພະນັກງານຄູອາຈານພຽງພໍແລະເໝາະສົມ ພ້ອມທັງມີປະສົບປະການເພື່ອຄຸ້ມຄອງຕິດຕາມການນຳໃຊ້ບັນດາແຫຼ່ງຮຽນຮູ້ຕ່າງໆ

ຕົວຊີ້ວັດ38: ມີການສົ່ງເສີມການແລກປ່ຽນຮຽນຮູ້ພາຍໃນສະຖາບັນ ແລະ ຈາກຊຸມຊົນ-ສັງຄົມ

# ລະບົບຂໍ້ມູນເພື່ອການບໍລິຫານ

ຕົວຊີ້ວັດ39: ມີລະບົບຂໍ້ມູນເພື່ອການບໍລິຫານ ແລະຄຸ້ມຄອງ ໃນສະຖາບັນທີ່ມີປະສິດທິພາບ ແລະ ທັນກັບສະພາບການ

ຕົວຊີ້ວັດ40: ມີຖານຂໍ້ມູນປະຫວັດນັກສຶກສາ (ເຊັ່ນ: ອັດຕາການອອກ ແລະ ປະສົບຜົນສໍາເລັດໃນການຮຽນ, ການຮຽນຈົບຫຼັກສູດ ແລະ ການກ້າວໄປສູ່ການຊອກວຽກເຮັດງານທໍາ) ແລະຖານຂໍ້ມູນຂອງຄູອາຈານ ແລະພະນັກງານບໍລິຫານ

ຕົວຊີ້ວັດ41: ມີລະບົບຂໍ້ມູນ ແລະ ຖານຂໍ້ມູນຂອງລາຍການຊັບສິນ ແລະເຄື່ອງໃນສາງ ທີ່ເປັນຂອງສະຖາບັນ ຖືກເກັບຮັກສາໄວ້

ຕົວຊີ້ວັດ42: ສະຖາບັນການສຶກສາ ມີການເຜີຍແຜ່ຂໍ້ມູນຂ່າວສານ ໂດຍຜ່ານຈົດໝາຍຂາວ, ແຜ່ນພັບ ແລະເວບໄຊທ໌

ຕົວຊີ້ວັດ43: ມີການຮັບປະກັນຄວາມປອດໄພດ້ານລະບົບຂໍ້ມູນເພື່ອການບໍລິຫານ

# ລະບົບການປະກັນຄຸນນະພາບພາຍໃນ

ຕົວຊີ້ວັດ44: ມີນະໂຍບາຍ ແລະຂັ້ນຕອນການປະກັນຄຸນນະພາບ

ຕົວຊີ້ວັດ45: ມີການເຜີຍແຜ່ ຫຼື ຈັດຝຶກອົບຮົມໃຫ້ພະນັກງານໃຫ້ມີຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບການປະກັນຄຸນນະພາບ

ຕົວຊີ້ວັດ46: ມີການຕິດຕາມ, ກວດກາ, ທົບທວນ ແລະປັບປຸງ ວຽກງານຢ່າງຕໍ່ເນື່ອງ

ຕົວຊີ້ວັດ47: ສະຖາບັນມີການດຳເນີນການປະເມີນຕົນເອງກ່ຽວກັບວຽກງານຄຸນນະພາບການສຶກສາຕາມແຜນການທີ່ໄດ້ວາງໄວ້

# ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ

ຕົວຊີ້ວັດ48: ມີນະໂຍບາຍ ແລະລະບຽບຫລັກການ ກ່ຽວກັບການຄົ້ນຄ້ວາວິທະຍາສາດ

ຕົວຊີ້ວັດ49: ມີການດຳເນີນການຄົ້ນຄ້ວາວິທະຍາສາດ ແລະ ຜົນການຄົ້ນຄວ້າວິທະຍາສາດ ເຊິ່ງມີປະໂຫຍດຕໍ່ສັງຄົມ.

ຕົວຊີ້ວັດ50: ມີການເຜີຍແຜ່ຜົນການຄົ້ນຄວ້າວິທະຍາສາດ ແລະ ການໃຫ້ການບໍລິການແກ່ສັງຄົມ

# ທິດທາງການພັດທະນາໃນຕໍ່ໜ້າ

- ຈັດພິມປື້ມຄູ່ມື (ສະບັບຊົ່ວຄາວ)
- ທົດລອງນຳໃຊ້ (ເລີ່ມຕົ້ນປີ 2012)
  - ເຝິກອົບຮົມໃຫ້ 4ມະຫາວິທະຍາໄລ ແລະ 4ວິທະຍາໄລເອກະຊົນ
  - ເຝິກອົບຮົມໃຫ້ 10 ສະຖາບັນສ້າງຄູ
  - ແຕ່ລະສະຖາບັນ ຈັດເຝິກອົບຮົມພາຍໃນ
  - ແຕ່ລະສະຖາບັນ ຈັດຕັ້ງການປະເມີນຕົນເອງ
- ສັງລວມຜົນການທົດລອງນຳໃຊ້ ແລະປັບປຸງ (ກາງປີ 2012)
- ສະເໜີລັດຖະມົນຕີ ເພື່ອຈັດພິມ ແລະ ປະກາດໃຊ້ (ທ້າຍປີ2012)
- ຊຸກຍູ້ການສ້າງເຄືອຂ່າຍຄຸນນະພາບ(ກຸ່ມຂອງສະຖາບັນເຊັ່ນ: 10ສະຖາບັນສ້າງຄູ, ບັນດາສະຖາບັນໃນຂົງເຂດສາທາລະນະສຸກ ແລະອື່ນໆ)
  - ເພື່ອຊຸກຍູ້ໃຫ້ສະຖາບັນດຳເນີນການປະເມີນຕົນເອງ
  - ຈັດຕັ້ງການປະເມີນພາຍໃນ
  - ແລກປ່ຽນບົດຮຽນ ແລະຊ່ວຍເຫລືອເຊິ່ງກັນແລະກັນ

ເອີ.. ກະບໍ່ມີໃຜ
ເວົ້າວ່າ ມັນຊິງ່າຍ!




ບໍ່ຈັກຫຍັງກັບຫຍັງ...
ມັນຄືຊິຍາກແທ້!

# ຂໍຂອບໃຈ